

## EPSDT ແມ່ນຫຍັງ?

EPSDT (ການກວດກັ່ນກອງເປັນລະຍະໃນຂັ້ນເລີ່ມຕົ້ນ, ການຄົ້ນເບິ່ງພະຍາດ, ແລະການປິ່ນປົວ), ເປັນສະວັດດີການການປິ່ນປົວສຸຂະພາບປ້ອງກັນແລະຄວບຄຸມ.

ບຸກຄົນ, ອາຍຸຕ່ຳ ກວ່າ 21 ປີ, ໄດ້ຈົດຊື່ເຂົ້າໃນການຄຸ້ມກັນ Apple Health (Medicaid) ມີສິດໃນEPSDT.ສະວັດດີການຟຣີອັນນີ້ລວມເອົາການກວດສຸຂະພາບເດັກນ້ອຍແຂງແຮງເປັນປະຈຳຊຶ່ງຈະຊ່ວຍຜູ້ໃຫ້ການປິ່ນປົວສຸຂະພາບຂອງລູກຂອງທ່ານພົບເຫັນແລະປິ່ນປົວບັນຫາແຕ່ຕົ້ນ.

## ແມ່ນຫຍັງເກີດຂຶ້ນໃນລະຫວ່າງການກວດສຸຂະພາບເດັກນ້ອຍແຂງແຮງ?

ລູກຫລືເດັກວັຍຣຸ່ນຂອງທ່ານຈະໄດ້ຮັບການກວດເບິ່ງສຸຂະພາບອັນຄົບຖ້ວນເວົ້າລົມກັນເຣື່ອງທີ່ບໍ່ໄດ້ຖືກລວມຢູ່ໃນລະຫວ່າງການຢ້ຽມຫມໍຍາມເຈັບປ່ວຍ,ລວມທັງ:

- ປະວັດສຸຂະພາບຂອງຄອບຄົວ
- ລູກຂອງທ່ານຈະເຣີມເຕີບໂຕຢ່າງໃດ
- ການສັກຢາຫລືການກວດທີ່ຕ້ອງການ
- ການກວດກັ່ນເບິ່ງການຟັງສຽງຫລືສາຍຕາ
- ການກວດເບິ່ງທາດກົ່ວໃນເລືອດ
- ບັນຫານຳການກິນຫລືການນອນ
- ສຸຂະພາບທາງປາກ
- ການກວດກັ່ນເບິ່ງສຸຂະພາບການເຕີບໂຕແລະການປະພຶດ
- ຄວາມຂ້ອງໃຈຂອງພໍ່ແມ່/ຜູ້ເບິ່ງແຍງດູແລ

## ແມ່ນໃຜຄວນຈະໄດ້ຮັບການກວດສຸຂະພາບເດັກນ້ອຍແຂງແຮງ?

ບຸກຄົນອາຍຸຕ່ຳກວ່າ 21 ປີຄວນຈະພົບທ່ານຫມໍ ແລະ ທ່ານຫມໍແຂ້ວຂອງເຂົາເຈົ້າຕາມປົກກະຕິ, ເຖິງແມ່ນວ່າເຂົາເຈົ້າບໍ່ເຈັບປ່ວຍກໍຕາມ. ການກວດສຸຂະພາບເປັນເວລາທີ່ຈະຖາມຄຳຖາມກ່ຽວກັບຄວາມຫ່ວງໃຍດ້ານສຸຂະພາບທຸກໆຢ່າງ. ການຢ້ຽມຢາມທ່ານຫມໍຂອງລູກຂອງທ່ານເມື່ອເວລາເຂົາເຈົ້າບໍ່ໄດ້ເຈັບປ່ວຍຈະເປັນໂອກາດເພື່ອຈະໄດ້ຮັບການຊີ້ນຳຊຶ່ງອາດຈະຊ່ວຍເຫລືອທ່ານ ຫລື ລູກຂອງທ່ານ.



## ເມື່ອໃດລູກຂອງທ່ານຄວນຈະໄດ້ຮັບການກວດເບິ່ງ?

ຈົ່ງໂທຣະສັບໄປຫາທ່ານຫມໍປິ່ນປົວສຸຂະພາບຂອງທ່ານເພື່ອຈະເຮັດຫມາຍນັດແລະຂໍເອົາການກວດ EPSDT. ຢ່າງຫນ້ອຍ, ລູກຂອງທ່ານຄວນຈະໄດ້ຮັບການກວດສຸຂະພາບຕາມອາຍຸຕໍ່ລົງໄປນີ້:

- **ກ່ອນອາຍຸ 1 ປີ:** ໃນເວລາ1ອາທິດ,1 ເດືອນ,2 ເດືອນ, 4ເດືອນ,6ເດືອນ,ແລະ9 ເດືອນ
- **ອາຍຸ 1 - 4 ປີ:** 12ເດືອນ,15ເດືອນ,18ເດືອນ,24 ເດືອນ, 30ເດືອນ,3 ປີ,ແລະ4ປີ
- **ອາຍຸ,5 - 20 ປີ:** ປີນຶ່ງເທື່ອນຶ່ງ

ທ່ານຫມໍຂອງທ່ານສາມາດຊ່ວຍເຫລືອທ່ານຊອກເບິ່ງຕາຕະລາງເວລາທີ່ໃຊ້ໄດ້ດີທີ່ສຸດສຳລັບລູກຂອງທ່ານ.



## ການສັກຢາກັນໂຣກແນວໃດແດ່ທີ່ລູກຕ້ອງການ?

ການສັກຢາກັນໂຣກຊ່ວຍຮັກສາລູກ ແລະ ຄອບຄົວຂອງທ່ານໃຫ້ຢູ່ດີມີແຮງ. ເພື່ອຈະຮູ້ຈັກວ່າຢາກັນໂຣກແນວໃດທີ່ລູກຂອງທ່ານຕ້ອງການດຽວນີ້, ແວ່ເຂົ້າຢ້ຽມ **cdc.gov/vaccines.**

## ຈະໃຫ້ລູກຂອງທ່ານສັກຢາກັນໂຣກໄດ້ແນວໃດ?

ຂໍໃຫ້ທ່ານຫມໍຂອງທ່ານທີ່ຈະເຮັດຫມາຍນັດໃຫ້ທ່ານສຳລັບການສັກຢາກັນໂຣກທີ່ຖືກແນະນຳບອກເພື່ອຈະປ້ອງກັນລູກ ແລະ ຄົນທີ່ຮັກຂອງທ່ານຈາກໂຣກທີ່ຢາວັກຊິນສາມາດປ້ອງກັນໄດ້.

## ເປັນຫຍັງຈຶ່ງສັກຢາກັນໂຣກ?

ການຕິດຕາມນຳຕາຕະລາງເວລາຂອງການສັກຢາກັນໂຣກຂອງທ່ານຈະຊ່ວຍ:

- ຮັກສາລູກ ແລະ ຄອບຄົວຂອງທ່ານໃຫ້ຢູ່ດີມີແຮງ
- ຮັກສາຊຸມນຸມຊົນຂອງທ່ານໃຫ້ອຸດົມສົມບູນ
- ຢຸດການແຜ່ຜາຍຂອງພະຍາດໄປຫາປະຊາຊົນຜູ້ຈະຕິດເຊື້ອໂຣກໄດ້ງ່າຍໆທີ່ສຸດ
- ຍ້ອນວ່າພໍ່ແມ່ຄົນອື່ນໄດ້ສັກຢາກັນໂຣກໃຫ້ລູກຂອງເຂົາເຈົ້າເພື່ອຈະຮັກສາໃຫ້ເຂົາເຈົ້າ ແລະ ຊຸມນຸມຊົນຂອງພວກເຮົາໃຫ້ຢູ່ດີມີແຮງ ແລະ ປອດພັຍ

## ການບໍຣິການດ້ານນາຍແປພາສາ

ຖ້າຫາກວ່າທ່ານປາກພາສາອັງກິດບໍ່ໄດ້ດີ ຫລື ທ່ານເປັນຄົນຫູຫນວກ, ຫູຫນວກຕາບອດ, ຫລື ຍາກທີ່ຈະຟັງສຽງ, ນາຍແປພາສາທີ່ຊ່ຽວຊານຈະມີ ໄວ້ໃຫ້ໃນຫລາຍໆພາສາ, ລວມທັງພາສາໃບ້ໂດຍບໍ່ຄິດຄ່າແນວໃດນໍາ ທ່ານ. ຈົ່ງບອກຜູ້ຕອນຮັບແຂກຮູ້ຈັກວ່າທ່ານຕ້ອງການນາຍແປພາສາໃນເວລາທີ່ທ່ານເຮັດຫມາຍນັດພົບຂອງທ່ານ.

ເພື່ອຣາຍຣະອຽດເພີ້ມເຕີມຈົ່ງແວ່ເຂົ້າປັຽມ **hca.wa.gov/interpreter-services**.

## ຄວາມເສັຽອົງຄະດ້ານການປາກເວົ້າ ຫລື ການຟັງສຽງ, ຫລື ບັນຫາ ນໍາການເຫນັງຕີງໄປມາ

ຖ້າຫາກວ່າທ່ານມີຄວາມເສັຽອົງຄະດ້ານການປາກເວົ້າ ຫລື ການຟັງສຽງ, ຫລື ບັນຫານໍາການເຫນັງຕີງໄປມາ, ທ່ານຄວນຈະບອກຜູ້ຕ້ອນຮັບແຂກໃນເວລາ ທີ່ທ່ານເຮັດຫມາຍນັດພົບຂອງທ່ານ. ຜູ້ຕ້ອນຮັບແຂກຂອງທ່ານຫມໍປິ່ນປົວສຸຂະພາບຂອງທ່ານຈະຊ່ວຍເຫລືອທ່ານທໍາການຈັດແຈງທີ່ຈໍາເປັນທຸກໆຢ່າງ.

## ການບໍຣິການຂົນສົ່ງໄປມາ

ທ່ານອາດຈະມີເງື່ອນໄຂໄດ້ຮັບຄວາມຊ່ວຍເຫລືອນໍາການຂົນສົ່ງໄປມາໄປຫາຫມາຍນັດພົບປິ່ນປົວສຸຂະພາບຂອງທ່ານໂດຍບໍ່ຄິດຄ່າແນວໃດຕໍ່ທ່ານ. ຫມາຍນັດພົບຕ້ອງແມ່ນສໍາລັບການປິ່ນປົວທີ່ຖືກຄຸ້ມກັນໂດຍ Apple Health. ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອເພື່ອຈະຊອກຫາການຂົນສົ່ງໄປມາ ຫລື ທ່ານຫມໍຢູ່ໃນເຂດຂອງທ່ານ, ກະຣຸນາໂທຫາ 1-800-562-3022.

ເພື່ອຣາຍຣະອຽດເພີ້ມເຕີມຈົ່ງແວ່ເຂົ້າປັຽມ **hca.wa.gov/transportation-help**.

## ຈະຊອກຫາທ່ານຫມໍໄດ້ແນວໃດ

### ສຸຂະພາບຮ່າງກາຍ ແລະ ການປະພຶດ

- ໂທຫາໂຄງການປິ່ນປົວທີ່ຖືກຄວບຄຸມນໍາຂອງທ່ານ
- ຖ້າຫາກວ່າທ່ານບໍ່ມີໂຄງການປິ່ນປົວທີ່ຖືກຄວບຄຸມ ນໍາຈົ່ງໂທຫາເລກ 1-800-562-3022

### ແຂ້ວ

- **DentistLink.org**
- **Insurekidsnow.gov/find-a-dentist/index.html**
- **fortress.wa.gov/hca/p1findaprovider/**
- ໂທຫາເລກ 1-800-562-3022



Washington State Health Care Authority

HCA ສອດຄ່ອງນໍາກົດຫມາຍສິດທິພົລເມືອງຂອງຣັດຖະບານກາງ ແລະ ຂອງຣັດວໍຊິງຕັນທີ່ກ່ຽວຂ້ອງນໍາທຸກໆຢ່າງແລະມຸ່ງຫມັ້ນຕໍ່ການເອົາໃຫ້ການເຂົ້າເຖິງເທົ່າທຽມກັນເຖິງການບໍຣິການຂອງພວກເຮົາ. ຖ້າຫາກວ່າທ່ານຕ້ອງການການອໍານວຍຄວາມສະດວກ, ຫລື ຕ້ອງການເອກສານຢູ່ໃນຮູບຮ່າງ ຫລື ພາສາອື່ນ, ກະຣຸນາໂທຫາເລກ 1-800-562-3022 (TRS: 711).

# EPSDT

# ການກວດສຸຂະພາບເດັກນ້ອຍແຂງແຮງສໍາລັບລູກ ຫລື ເດັກວັຍຮຸ່ນຂອງທ່ານ



Washington Apple Health

HCA 19-0056 LA (12/22) Laotian